multicultural health communication

NSW GOVERNMENT Health

Lao
[DOH-7165]

# ໂຣກ Parvovirus B19 ແລະ Fifth Disease

## Parvovirus B19 and Fifth Disease

### ໂຣກ parvovirus b19 ແມ່ນຫຍັງ?

- parvovirus B19 ແມ່ນເຊື້ອໄວຣັສຊນິດນຶ່ງຊຶ່ງຄົນເປັນກັນຫຼາຍ (ແລະເປັນກັບຄົນເທົ່ານັ້ນ). ປະມານ 50 ເປີເຊັນຂອງຜູ້ໃຫຍ່ຈະເຄີຍໄດ້ຕິດເຊື້ອມາແລ້ວໃນຕອນໃດຕອນນຶ່ງທີ່ຍັງເປັນເດັກນ້ອຍຫຼືຕອນວັຍຣຸ່ນ.

### ເຊື້ອນີ້ແຜ່ພາຍຢ່າງໃດ?

- ເຊື້ອນີ້ແຜ່ພາຍໂດຍການສັມຜັດກັບລະອອງນ້ຳທີ່ມີເຊື້ອ ຈາກລະບົບຫາຍໃຈ (ຕົວຢ່າງເຊັ່ນໂດຍການໄອ), ແລະ ຈາກແມ່ຫາເດັກໃນທ້ອງ.
- ຣະຍະການຟັກຕົວຂອງໂຣກແມ່ນຢູ່ໃນລະຫວ່າງ 4-20 ມື້ເມື່ອເລີ້ມຕິດເຊື້ອ ໄປເຖິງຣະຍະກ້າວໄປສູ່ການເປັນຕຸ່ມຜື່ນແດງແບບສະເພາະຫຼືມີອາການອື່ນໆ.
- ຄົນຜູ້ນັ້ນຈະຕິດເຊື້ອມາກ່ອນແລ້ວກ່ອນຈະເປັນຜື່ນແດງ.

### ການຕິດເຊື້ອນີ້ຈະເຮັດໃຫ້ເຈັບປ່ວຍແບບໃດ?

- ການເຈັບປ່ວຍສ່ວນໃຫຍ່ທີ່ເກີດຈາກການຕິດເຊື້ອ parvovirus B19 ແມ່ນ 'fifth disease', ໂຣກຜື່ນແດງແບບເບົາໆ ຊຶ່ງມັກເກີດກັບເດັກນ້ອຍເປັນສ່ວນໃຫຍ່.
- ເດັກທີ່ເຈັບຈະມີຜື່ນແດງລັກສນະສເພາະຢູ່ໜ້າ ແບບ ແກ້ມຖືກຕົບ 'slapped-cheek' ແລະມີຜື່ນແດງເປັນສາຍຕາມຮ່າງກາຍແລະແຂນຂາ.
- ບາງຄັ້ງຜື່ນນີ້ອາດຄັນ. ຕາມປົກກະຕິ ເດັກຈະບໍ່ເຈັບປ່ວຍຫຍັງຫຼາຍ, ແລະຜື່ນນັ້ນກໍຈະຫາຍໄປເອງພາຍໃນເຈັດຫາ 10 ມື້.
- ເມື່ອເດັກນ້ອຍເຊົາຈາກໂຣກ parvovirus, ລາວກໍຈະສ້າງພູມຕ້ານທານຕລອດໄປ, ແລະລາວຈະມີພູມປ້ອງກັນຈາກການຕິດເຊື້ອໃນອະນາຄົດ.
- ຜູ້ໃຫຍ່ທີ່ຕິດເຊື້ອ parvovirus B19 ອາດບໍ່ມີອາການຫຍັງໝົດ, ຫຼືອາດຈະເປັນຜື່ນ, ເຈັບຫຼືໃຄ່ ຕາມຂໍ່, ຫຼືເປັນທັງສອງຢ່າງ. ອາການຂອງຂໍ່ນັ້ນ ຕາມປົກກະຕິຈະຫາຍໄປພາຍໃນນຶ່ງຫຼືສອງອາທິດ, ແຕ່ອາດຈະເປັນດົນກວ່ານັ້ນ.
- ໂດຍທົ່ວໄປແລ້ວ 'Fifth disease' ແມ່ນພຍາດບໍ່ຮ້າຍແຮງ. ມັນຈະເຊົາໄປເອງໂດຍບໍ່ຕ້ອງປິ່ນປົວຫຍັງສຳລັບເດັກນ້ອຍ ແລະ ຜູ້ໃຫຍ່ກໍເຊັ່ນກັນຖ້າວ່າມີສຸຂພາບດີຢູ່ແລ້ວ.

**Parvovirus B19 ແລະການຖືພາ?**

- ຕາມປົກກະຕິແລ້ວຈະບໍ່ມີອາການແຊກຊ້ອນທີ່ຮ້າຍແຮງຫຍັງສຳລັບແມ່ຍິງຖືພາຫຼືລູກຂອງລາວຫຼັງຈາກທີ່ໄດ້ຢູ່ໃກ້ກັບຄົນທີ່ມີໂຣກ fifth disease ນີ້.
- ປະມານ 50 ເປີເຊັນຂອງແມ່ຍິງກໍໄດ້ມີພູມຕ້ານທານຕໍ່ໂຣກ parvovirus B19 ນີ້ຢູ່ແລ້ວ, ແລະແມ່ຍິງເຫຼົ່ານີ້ພ້ອມລູກຂອງເຂົາເຈົ້າກໍໄດ້ຮັບການປ້ອງກັນຈາກການຕິດເຊື້ອໂຣກແລະການເຈັບປ່ວຍ.
- ເຖິງແມ່ນວ່າແມ່ຍິງຈະອ່ອນໄຫວຕໍ່ໂຣກແລະໄດ້ຕິດເຊື້ອ parvovirus B19 ເຂົ້າໄປ, ໂດຍທົ່ວໄປແລ້ວລາວກໍຈະຮູ້ສຶກບໍ່ສະບາຍພຽງເລັກນ້ອຍ.
- ດ້ວຍເຫດຜົນອັນດຽວກັນ, ລູກໃນທ້ອງຂອງລາວກໍຈະບໍ່ມີບັນຫາຊຶ່ງພໍຈະຖືໄດ້ວ່າສືບເນື່ອງມາຈາກການຕິດເຊື້ອຈາກເຊື້ອ parvovirus B19.
- ແຕ່ຢ່າງໃດກໍດີ, ບາງຄັ້ງ parvovirus B19 ກໍຈະເປັນສາເຫດໃຫ້ເດັກໃນທ້ອງເປັນໂຣກໂລຫິດຈາງຢ່າງແຮງ ແລະ ຜູ້ເປັນແມ່ອາດຈະຫຼຸລູກໄດ້.
- ບໍ່ມີຫຼັກຖານຢັ້ງຢືນວ່າການຕິດເຊື້ອ parvovirus B19 ເປັນສາເຫດໃຫ້ເດັກເກີດມາພິການຫຼືປັນຍາອ່ອນ.
- ບໍ່ມີການແນະນຳຢ່າງກວ້າງຂວາງວ່າ ໃຫ້ຕິດຕາມອາການຂອງແມ່ຍິງຖືພາ ທີ່ມີປະຫວັດວ່າເຄີຍຕິດເຊື້ອ parvovirus B19 ຢ່າງໃກ້ຊິດ. ທ່ານໝໍບາງຄົນກໍຖືວ່າການຕິດເຊື້ອ parvovirus B19 ຂອງແມ່ຍິງຖືພາເປັນການບໍ່ສ່ຽງສູງ ແລະ ໃຫ້ການດູແລກ່ອນຄອດຕາມທັມມະດາທົ່ວໆໄປ. ໝໍຄົນອື່ນໆອາດຈະໃຫ້ມາຫາເລື້ອຍຂຶ້ນແລະເອົາເລືອດໄປກວດ ແລະ ເຮັດ ກວດອາວຕຣາຊາວ (ultrasound) ເພື່ອຕິດຕາມເບິ່ງສຸຂພາບຂອງເດັກໃນທ້ອງ. ຢ່າງໃດກໍດີ, ຜົນປໂຍດທີ່ໄດ້ຮັບຈາກການກວດແບບນີ້ ກໍຍັງບໍ່ທັນແຈ້ງເທື່ອ.
- ຖ້າຫາກວ່າເດັກໃນທ້ອງຮູ້ສຶກຈະອອກອາການວ່າບໍ່ສະບາຍ, ກໍມີການກວດຫາໂຣກແລະທາງເລືອກໃນການປິ່ນປົວຫຼາຍແບບ, ແລະແພດຜະດຸງຄັນຂອງທ່ານຈະປຶກສາກັບທ່ານເຣື່ອງທາງເລືອກຕ່າງໆແລະຜົນປໂຍດທີ່ອາດຈະໄດ້ຮັບ ແລະການສ່ຽງທີ່ອາດຈະເກີດຂຶ້ນ.

**ການກວດເລືອດຫາເຊື້ອ parvovirus B19**

- ການກວດເລືອດຫາເຊື້ອ parvovirus B19 ອາດຈະສະແດງໃຫ້ເຫັນວ່າ:
    1. ທ່ານໄດ້ມີພູມຕ້ານທານຕໍ່ເຊື້ອ parvovirus B19 ນີ້ແລ້ວແລະບໍ່ມີການຕິດເຊື້ອ
    2. ທ່ານບໍ່ໄດ້ມີພູມຕ້ານທານແລະອາດຕິດເຊື້ອໄດ້ ຖ້າຫາກວ່າໄດ້ໃກ້ຊິດກັບພຍາດ, ຫຼື
    3. ທ່ານຫາກໍຕິດເຊື້ອຫວ່າງໝໍ່ໆນີ້.

**ການປ້ອງກັນການຕິດເຊື້ອ parvovirus B19**

- ບໍ່ມີຢາສັກປ້ອງກັນຫຼືຢາກິນປ້ອງກັນການຕິດເຊື້ອ parvovirus B19.

- ມີການແນະນຳໃຫ້ລ້າງມືເລື້ອຍໆຊຶ່ງຖືວ່າອາດຈະວິທີທີ່ໃຊ້ໄດ້ແລະເປັນຜົນ ເພື່ອຫຼຸດຜ່ອນການແຜ່ຜາຍຂອງເຊື້ອ parvovirus.
- ການແຍກຄົນທີ່ມີເຊື້ອ fifth disease ຈາກບ່ອນເຮັດວຽກ, ສູນດູແລເດັກ, ໂຮງຮຽນ, ຫຼືສະຖາບັນອື່ນໆ ກໍຄົງຈະບໍ່ປ້ອງກັນການແຜ່ຜາຍຂອງເຊື້ອ parvovirus B19 ໄດ້, ເນື່ອງຈາກວ່າຄົນເຈັບນັ້ນສາມາດແຜ່ເຊື້ອໄດ້ແລ້ວກ່ອນທີ່ເຂົາເຈົ້າຈະອອກຕຸ່ມໃຫ້ເຫັນ.
- ແມ່ຍິງຖືພາກໍບໍ່ຈຳເປັນຕ້ອງໄດ້ຖືກແຍກອອກຈາກບ່ອນເຮັດວຽກຊຶ່ງມີໂຣກ fifth disease ລະບາດ, ເນື່ອງຈາກສາເຫດທີ່ກ່າວມາຂ້າງເທິງ. ການທີ່ລາວຈະແຍກໂຕອອກຈາກບ່ອນເຮັດທີ່ມີກໍຣະນີຂອງໂຣກ fifth disease ຫຼືບໍ່ນັ້ນແມ່ນການຕົກລົງໃຈເປັນການສ່ວນຕົວຂອງລາວເອງ, ຫຼັງຈາກທີ່ໄດ້ປຶກສາຫາລືກັບຄອບຄົວ, ທ່ານໝໍ, ແລະ ນາຍຈ້າງ.

**ຣາຍລະອຽດເພີ້ມເຕີມ - Public Health Units in NSW (ໜ່ວຍອະນາມັຍສາທາຣະນະໃນຣັດ** NSW)

ຖ້າຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ໜ່ວຍອະນາມັຍສາທາຣະນະທ້ອງຖິ່ນ ຫຼື ສູນອະນາມັຍຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ 'NSW Government' ທາງໜ້າຂອງປື້ມໂທຣະສັບ ຫົວຂາວ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**www.health.nsw.gov.au**